ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------

ສຳນັກງານ ຄຄຊ
ພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່

ເລກທີ 041/ສຄຄຊ.ຝຄ
ນະຄອນຫຼວງວຽງຈັນ, ວັນທີ 21 ສິງຫາ 2014

## ແຈ້ງການ

**ເຖິງ:** ພະນັກງານ ພາຍໃນ ສຳນັກງານ ຄຄຊ.
**ເລື່ອງ:** ມີໜັງສືໃໝ່ມາບັນຈຸໃນ ຫ້ອງສະໝຸດຂອງສຳນັກງານ ຄຄຊ.

- ອີງຕາມ ໜັງສືສະເໜີ ຂອງພະແນກຫ້ອງການຄຸ້ມຄອງ ແລະ ບໍລິຫານ, ຕລຊລ, ສະບັບເລກທີ 078 /ຕລຊລ .ຫກ, ລົງວັນທີ 14 ສິງຫາ 2014;
- ອີງຕາມທິດຊີ້ນຳຂອງ ທ່ານຫົວໜ້າ ສຳນັກງານ ຄຄຊ ໃນວັນທີ 15 ສິງຫາ 2014.

ພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ (TE) ຂໍຖືເປັນກຽດແຈ້ງມາຍັງບັນດາ ພະນັກງານ ພາຍໃນສຳນັກ ງານ ຄຄຊ ຊາບວ່າ: ໃນວັນທີ 20 ສິງຫາ 2014 ໄດ້ບັນຈຸປຶ້ມ "ຈຸດເບິ່ງຕະຫຼາດຫຼັກຊັບລາວ 2014" ຫຼື "LSX Outlook 2014" ໂດຍໄດ້ຮັບການສະໜັບສະໜູນຈາກ ຕະຫຼາດຫຼັກຊັບລາວ ຈຳນວນ 100 ຫົວ ເຂົ້າມາບັນຈຸໃນຫ້ອງສະໝຸດ ສຳນັກງານ ຄຄຊ .

ຊຶ່ງໃນປຶ້ມດັ່ງກ່າວ ແມ່ນໄດ້ນຳສະເໜີເຖິງປະຫວັດຄວາມເປັນມາ ແລະ ຜົນງານໃນໄລຍະຜ່ານມາຂອງ ຕະຫຼາດຫຼັກຊັບລາວ, ບັນດາບໍລິສັດຫຼັກຊັບ ແລະ ບໍລິສັດຈົດທະບຽນ ພ້ອມດຽວກັນນັ້ນ ຍັງໄດ້ນຳສະເໜີເຖິງບໍລິສັດທີ່ຈະກຽມເຂົ້າຈົດທະບຽນ ກັບຕະຫຼາດຫຼັກຊັບລາວ ໃນໄວໆນີ້ອີກດ້ວຍ.

ດັ່ງນັ້ນ, ເພື່ອເຮັດໃຫ້ ພະນັກງານ ພາຍໃນ ສຳນັກງານ ຄຄຊ ໄດ້ຮັບຄວາມຮູ້ ແລະ ຂໍ້ມູນຂ່າວສານໃໝ່ໆ, ຈຶ່ງແຈ້ງມາຍັງພະນັກງານໝົດທຸກຄົນເພື່ອຊາບ ແລະ ເຂົ້າໄປນຳໃຊ້ປຶ້ມດັ່ງກ່າວ ທີ່ຫ້ອງສະໝຸດສຳນັກງານ ຄຄຊ ຂອງພວກເຮົາ.

ພະແນກ TE ມີຄວາມຍິນດີເປັນຢ່າງຍິ່ງ ທີ່ທຸກທ່ານເຂົ້າໄປໃຊ້ບໍລິການຫ້ອງສະໝຸດ.

ຮ. **ພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່**

ດຣ. ສຸດທຳເດດ ບຸນລໍໄຊ

# LSX OUTLOOK 2014

ຕະຫຼາດຫຼັກຊັບລາວ
LAO SECURITIES EXCHANGE



## Start Up Your Wealth